DEPARTMENT OF HEALTH

# ຂ້ອຍຄວນຈະໄປຮັບການກວດມື້ໃດ? ສະມາຊິກໃນຄອບຄົວທີ່ເຈັບປ່ວຍ

## ຂໍ້ຄວາມ

[ຈັງຫວະເພັງ]

[ການເລົ່າເລື່ອງ]

ແມ່ນໃຜຄວນຈະໄດ້ຮັບການກວດຊອກຫາໂຄວິດ-19?

ມີຄົນໃນຄົວເຮືອນຂອງທ່ານເປັນໄຂ້ເນື່ອງຈາກໂຄວິດ-19. ພວກເຂົາໄດ້ພັກຢູ່ເຮືອນ (ແຍກປ່ຽວ), ແຕ່ທ່ານໄດ້ຢູ່ໃກ້ກັບພວກເຂົາຢູ່ໃນເຮືອນ.

ຄຳແນະນຳໃນການກວດບອກວ່າ ສະມາຊິກທຸກຄົນໃນຄົວເຮືອນຄວນຈະໄປຮັບການກວດຫຼັງຈາກທີ່ໄດ້ຢູ່ໃກ້ກັບຄົນໃນເຮືອນທີ່ເປັນໂຄວິດ-19.

ຄົນທີ່ເຈັບປ່ວຍຕ້ອງໄດ້ພັກຢູ່ເຮືອນ ແລະ ຢູ່ຫ່າງຈາກຄົນອື່ນຢ່າງໜ້ອຍຫ້າວັນ (ແຍກປ່ຽວ), ຍ້ອນວ່າພວກເຂົາອາດຈະແຜ່ເຊື້ອໃຫ້ແກ່ຄົນອື່ນໄດ້ໃນໄລຍະເວລານີ້. ພວກເຂົາຄວນຈະໃສ່ຜ້າປິດປາກເມື່ອຢູ່ໃກ້ຄົນອື່ນໃນເຮືອນ. ພວກເຂົາອາດຈະຕ້ອງໄດ້ໃຫ້ ພັກຢູ່ເຮືອນດົນກວ່າເກົ່າ ຖ້າວ່າພວກເຂົາຍັງມີອາການ, ຫຼື ຖ້າພວກເຂົາບໍ່ສາມາດໃສ່ຜ້າປິດປາກ.

ເຂົ້າເບິ່ງເວັບເພສ໌ ຖ້າທ່ານເປັນໄຂ້ (If You Are Sick) ຂອງພວກເຮົາ (https://www.health.state.mn.us/diseases/coronavirus/materials/index.html) ເພື່ອເບິ່ງຂໍ້ມູນສະເພາະກ່ຽວກັບໄລຍະເວລາໃນການພັກຢູ່ເຮືອນ ຖ້າທ່ານເປັນໂຄວິດ-19.

ຖ້າທ່ານອາໃສຢູ່ກັບຄົນທີ່ເປັນໂຄວິດ-19, ທ່ານອາດຈະຕ້ອງໄດ້ກັກໂຕ ຫຼັງຈາກຄົນທີ່ເປັນໄຂ້ສິ້ນສຸດການແຍກປ່ຽວຂອງພວກເຂົາ. ເຂົ້າເບິ່ງເວັບເພສ໌ ສຳພັດໃກ້ຊິດ ແລະ ກັກໂຕເອງ ຂອງ MDH (MDH Close Contacts and Quarantine) ສຳລັບຂໍ້ມູນເພີ່ມເຕີມໃນການໃສ່ຜ້າປິດປາກໃນເວລາຢູ່ຮ່ວມກັບຄົນອື່ນ ແລະ ໄລຍະເວລາໃນການພັກຢູ່ເຮືອນ: (https://www.health.state.mn.us/diseases/coronavirus/close.html)

ສະມາຊິກໃນຄົວເຮືອນທຸກໝົດຄົນຄວນຈະໄປຮັບການກວດ ວັນທີຫ້າ ຫຼັງຈາກຜູ້ທີ່ເປັນໄຂ້ສິ້ນສຸດການແຍກປ່ຽວຂອງພວກເຂົາ ເພື່ອໃຫ້ແນ່ໃຈວ່າບໍ່ມີໃຜຈະໄດ້ຮັບເຊື້ອ. ໃນກໍລະນີນີ້, ມື້ສຸດທ້າຍຂອງການແຍກປ່ຽວສຳລັບສະມາຊິກໃນຄອບຄົວຂອງທ່ານແມ່ນວັນພະຫັດ. ສະມາຊິກທຸກຄົນໃນຄົວເຮືອນຄວນຈະໄປຮັບການກວດ ຫຼັງຈາກນັ້ນຫ້າວັນ, ໃນວັນອັງຄານຕໍ່ໄປ.

ຮຽນຮູ້ເພີ່ມເຕີມວ່າ ເວລາໃດທີ່ທ່ານຄວນຈະໄປຮັບການກວດ, ແລະ ໄປຮັບການກວດໄດ້ຢູ່ໃສ, ເຂົ້າເບິ່ງໄດ້ທີ່ເວັບເພສ໌ການກວດໂຄວິດ-19 ຂອງ MDH. (https://www.health.state.mn.us/diseases/coronavirus/testsites/index.html)

[ຈັງຫວະເພັງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

2/2/22 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989*